**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ພະແນກຍຸຕິທຳແຂວງ ເລກທີ 263/ພຍທ

ສະຫວັນນະເຂດ, ວັນທີ 03 / ເມສາ / 2026

## ຈົດໝາຍແຈ້ງເຊີນປະມູນ
## ໂຄງການປັບປຸງ-ກໍ່ສ້າງເດີ່ນ ແລະ ບ່ອນຈອດລົດ, ພ້ອມບູລະນະອາຄານຫ້ອງການ ຂອງພະແນກຍຸຕິທຳແຂວງ

- ອີງຕາມ ຂໍ້ຕົກລົງຂອງທ່ານປະທານຄະນະກຳມະການປົກຄອງແຂວງ ສະບັບເລກທີ 282/ຄປຂ, ລົງວັນທີ 04 ມີນາ 2026 ວ່າດ້ວຍການອະນຸມັດຈັດຕັ້ງປະຕິບັດໂຄງການປັບປຸງ-ກໍ່ສ້າງເດີ່ນ ແລະ ບ່ອນຈອດລົດ, ພ້ອມບູລະນະອາຄານຫ້ອງການ ຂອງພະແນກຍຸຕິທຳແຂວງ.
- ອີງຕາມ ຂໍ້ຕົກລົງຂອງທ່ານປະທານຄະນະກຳມະການປົກຄອງແຂວງ ສະບັບເລກທີ 429/ຄປຂ, ລົງວັນທີ 27 ມີນາ 2026 ວ່າດ້ວຍການແຕ່ງຕັ້ງຄະນະກຳມະການປະມູນ ແລະ ຈັດຊື້-ຈັດຈ້າງ ໂຄງການປັບປຸງ-ກໍ່ສ້າງເດີ່ນ ແລະ ບ່ອນຈອດລົດ, ພ້ອມບູລະນະອາຄານຫ້ອງການ ຂອງພະແນກຍຸຕິທຳແຂວງ.

ພະແນກຍຸຕິທຳແຂວງ ສະຫວັນນະເຂດ ຂໍຖືເປັນກຽດ ແລະ ຍິນດີຮຽນເຊີນບັນດາບໍລິສັດພາຍໃນແຂວງ, ທີ່ມີເອກະສານໃບອະນຸຍາດດຳເນີນທຸລະກິດກໍ່ສ້າງເຄຫາສະຖານ ທີ່ມີຄວາມສົນໃຈ ແລະ ຄວາມພ້ອມເຂົ້າຮ່ວມແຂ່ງຂັນການປະມູນ ໂຄງການປັບປຸງເດີ່ນ ແລະ ຮ່ອງລະບາຍນໍ້າ ຂອງພະແນກຍຸຕິທຳແຂວງ. ທີ່ນຳໃຊ້ທຶນປົກກະຕິຂອງແຂວງປີ 2026 (ລາຄາຊອງ 2,000,000 ກີບ/ຊອງ).

ບັນດາທ່ານທີ່ສົນໃຈສາມາດເຂົ້າມາພົວພັນຊື້ເອກະສານໄດ້ທີ່ພະແນກຍຸຕິທຳແຂວງ ສະຫວັນນະເຂດ, 020 9665 9188, ເລີ່ມຂາຍຊອງປະມູນ ແຕ່ວັນທີ 03 ເມສາ 2026 ຫາ ວັນທີ 03 ພຶດສະພາ 2026 (ຕາມໂມງລັດຖະການ).

- ເງິນຄໍ້າປະກັນ ມູນຄ່າຕໍ່າສຸດ 2% ຂອງມູນຄ່າທີ່ຍື່ນຊອງປະມູນ.
- ຕ້ອງໃບທະບຽນຄົບຊຸດເຊັ່ນ: ໃບທະບຽນວິສາຫະກິດ, ໃບອະນຸຍາດດຳເນີນທຸລະກິດ (ຄົບຖ້ວນ).
- ລົງຢັ້ງຢືນພາກສະໜາມ ຈະໄດ້ຈັດຂຶ້ນວັນທີ 01 ພຶດສະພາ 2026, ເວລາ 09 ໂມງ 00 ນາທີ.
- ກອງປະຊຸມເປີດຊອງປະມູນ ຈະໄດ້ຈັດຂຶ້ນ ໃນວັນທີ 03 ພຶດສະພາ 2026, ເວລາ 09 ໂມງ 00 ນາທີ.
- ທຸກໆເອກະສານຈະເປີດຊ່ອງໜ້າຄະນະກະມະການປະມູນ ແລະ ບໍລິສັດເຂົ້າຮ່ວມ, ທີ່ຫ້ອງປະຊຸມພະແນກຍຸຕິທຳແຂວງ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ບັນດາບໍລິສັດພາຍໃນແຂວງ ທີ່ມີຄວາມສົນໃຈ ແລະ ເຂົ້າຮ່ວມແຂ່ງຂັນການປະມູນໃນຄັ້ງນີ້ດ້ວຍ.

**ຫົວໜ້າພະແນກ**

ພະແນກ ຍຸຕິທຳ ແຂວງ ສະຫວັນນະເຂດ

ສຸກມາລາ ຈັນທະວົງ

Soukmala CHANTHAVONG